ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 156 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 17 FEB 2012

# ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ໂຮງຊວດຈຳ

- ອີງຕາມ ດຳລັດວ່າດ້ວຍໂຮງຊວດຈຳ ສະບັບເລກທີ 10/ນຍ, ລົງວັນທີ 02 ກຸມພາ 2002 ແລະ ບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍໂຮງຊວດຈຳ ສະບັບເລກທີ 01/ທຫລ, ລົງວັນທີ 09 ມັງກອນ 2003.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ສົນໃຈຢາກສ້າງຕັ້ງ ໂຮງຊວດຈຳ ຈະຕ້ອງປະຕິບັດເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ດັ່ງລຸ່ມນີ້:

## 1. ເງື່ອນໄຂ

1) ມີອາຍຸ 25 ປີຂຶ້ນໄປ;
2) ມີຄຸນສົມບັດດີ, ບໍ່ເຄີຍຕ້ອງໂທດທາງອາຍາໃນສະຖານລັກຊັບ, ສໍ້ໂກງ ຫລື ຍັກຍອກຊັບມາກ່ອນ;
3) ມີທຶນຈົດທະບຽນຢ່າງຕໍ່າ 50.000.000 ກີບ;
4) ມີຖານະການເງິນດີ, ໄດ້ຮັບຄວາມເຊື່ອຖືເປັນທີ່ຍອມຮັບຂອງປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ;
5) ໂຮງຊວດຈຳຕ້ອງມີ ສະຖານທີ່ຕັ້ງເໝາະສົມ, ມີອາຄານທີ່ໄດ້ມາດຕະຖານ, ມີຫ້ອງນິລະໄພທີ່ສາມາດກັນໄຟໄໝ້ໄດ້ຢ່າງໜ້ອຍສອງຊົ່ວໂມງຂຶ້ນໄປ ແລະ ມີອຸປະກອນອື່ນໆທີ່ຈຳເປັນ ເພື່ອຮັບປະກັນຄວາມປອດໄພຕໍ່ຊັບຊວດຈຳ.

## 2. ການປະກອບເອກສານ

1) ຄຳຮ້ອງຂໍອະນຸຍາດສ້າງຕັ້ງ ໂຮງຊວດຈຳ ຕາມແບບຟອມທີ່ ທຫລ ວາງອອກ;
2) ບົດວິພາກ ຫລື ແຜນການດຳເນີນທຸລະກິດ ໂຮງຊວດຈຳ 05 ປີທຳອິດ;
3) ແຜນການ ລາຍຮັບ - ຈ່າຍ ລ່ວງໜ້າ;
4) ກົດລະບຽບພາຍໃນ (ລວມທັງໂຄງຮ່າງການຈັດຕັ້ງ);

5) ໃບສະຫລຸບຊັບສິນບັດ (ຊັບສິນ, ຫນີ້ສິນ ແລະ ທຶນ);
6) ລາຍການຊັບສິນບັດຄົງທີ່ ແລະ ຫັກຄ່າຫລຸ້ຍຫ້ຽນ;
7) ໃບຢັ້ງຢືນຖານະການເງິນ (ເງິນຝາກທະນາຄານ);
8) ຊີວະປະຫັວດຫຍໍ້, ໃບຢັ້ງຢືນທີ່ຢູ່ປະຈຸບັນ, ໃບແຈ້ງໂທດ, ສຳເນົາບັດປະຈຳຕົວ ແລະ ສຳເນົາສຳມະໂນຄົວ ຂອງຜູ້ຂໍສ້າງຕັ້ງ;
9) ໃບທະບຽນວິສາຫະກິດ ແລະ ໃບທະບຽນການເສຍອາກອນ ທີ່ດຳເນີນຢູ່ (ຖ້າເປັນນິຕິບຸກຄົນ);
10) ຮ່າງ ສັນຍາຊວດຈຳ;
11) ຮ່າງ ປຶດບັນທຶກຂາຍຊັບຊວດຈຳ;
12) ໃບຢັ້ງຢືນ ແລະ ແຜນວາດທີ່ຕັ້ງສຳນັກງານ ທີ່ເຊັນຮັບຮອງຈາກອຳນາດການປົກຄອງ;
13) ຮູບພາບປະກອບ ສະຖານທີ່ຕັ້ງ ແລະ ອຸປະກອນຈຳນວນຫນຶ່ງ (ຕູ້ເຊັບ, ໂຕະ - ຕັ່ງ);
14) ກໍລະນີຜູ້ຖືຮຸ້ນເປັນພະນັກງານ ຫລື ເຄີຍເປັນພະນັກງານຢູ່ອົງກອນອື່ນມາກ່ອນ ຕ້ອງປະກອບເອກະສານຢັ້ງຢືນຢ່າງເປັນລາຍລັກອັກສອນ;
15) ໃບແຕ່ງຕັ້ງມອບກຳມະສິດ ຜູ້ຕາງໜ້າພົວພັນວຽກງານນຳ ທະນາຄານແຫ່ງ ສປປ ລາວ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ ★ ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ